# ກົດລະບຽບຂອງການຢູ່ເຮືອນຫລວງ 住まい方のルール(ラオス語版)

ເຮືອນຫລວງ, ເປັນເຮືອນຢູ່ແບບລວມໝູ່, ມີຄົນຕ່າງໆອາໃສຢູ່ລວມກັນ, ດັ່ງນັ້ນ ການ (ນັບຖືກົດລະບຽບ ຢູ່ເຮືອນຫລວງ) ທຸກໆຄົນຕ້ອງຖືເປັນເລື່ອງສຳຄັນ.

## ການຖິ້ ມຂີ້ເຫຍື້ອ ゴミの出(だ)し方(かた)

ການຖິ້ ມຂີ້ເຫຍື້ອຂອງ ບ້ານ, ຄຸ້ມເຂດ, ເມືອງ, ທີ່ເຈົ້າຢູ່ນີ້, ກັບເຂດອື່ນໆອາດຈະແຕກຕ່າງກັນ. ດັ່ງນັ້ນ ໃຫ້ຖາມຮ້ານ ( ຟືໂດຊັ່ງ ) ຫລື ຖາມຄົນໄກ້ຄຽງ, ກ່ຽວກັບວັນເວລາແລະສະໜິດຂີ້ເຫຍື້ອຈະຖິ້ ມແຕ່ລະວັນ

◆ເນື້ອຄວາມໃຫ້ຖາມຮ້ານ ( ຟືໂດຊັ່ງ ) ຫລື ຄົນໄກ້ຄຽງ.

①ຂີ້ເຫຍື້ອຈູດໄດ້ ແລະ ຂີ້ເຫຍື້ອຈູດບໍ່ໄດ້.
②ການແຍກຂີ້ເຫຍື້ອ ເປັນວັດຖຸດິບ.
③ວັນເວລາຖິ້ ມຂີ້ເຫຍື້ອ.
④ບ່ອນຖິ້ ມຂີ້ເຫຍື້ອ.
⑤ເວລາຈະເອົາເຄື່ອງຂອງໃຫຍ່ໆຖິ້ ມ.



ຂີ້ເຫຍື້ອຈູດໄດ້



ຂີ້ເຫຍື້ອຈູດບໍ່ໄດ້



ຂີ້ເຫຍື້ອເປັນວັດຖຸດິບ



ຂີ້ເຫຍື້ອໃຫ່ຍ



* ຂວດ, ກະປ໋ອງ, ໜັງສືພິມ, ວາຣະສານ, ຜ້າຫົ່ມແລະເຄື່ອງນຸ່ງ, ຂວດປະລັດສະຕິກ ສິ່ງຂອງທີ່ກ່າວມານີ້, ວິທີທ້ອນໂຮມ ແລະການມາເກັບເອົານັ້ນ, ແຕ່ລະເຂດບໍ່ຄືກັນ.

## ວິທີໃຊ້ຫ້ອງຄົວກິນ 台所(だいどころ)の使(つか)い方(かた)

ຈົ່ງໃຊ້ຫ້ອງຄົວກິນໃຫ້ສະອາດຢູ່ເລື້ອຍໆ.
ອ່າງລ້າງຂອງຮູລະບາຍນ້ຳ, ເອົາຂີ້ເຫຍື້ອແລະນ້ຳມັນທອດ ຖອກລົງບໍ່ໄດ້, ເພາະຈະພາໃຫ້ຕັນ.
ຖ້າຖອກເທໃຫລລົງໄປ ຈະເປັນເຫດໃຫ້ ນ້ຳຫ້ວຍ ແລະ ນ້ຳທະເລເປື້ອນ.



* ຖ້າຈະຖິ້ ມນ້ຳມັນທອດ, ຍ່ອງໜັງສືພິມ ຊຸບເອົານ້ຳມັນ ແລ້ວຖິ້ ມປົນກັນກັບ ຂີ້ເຫຍື້ອຈູດໄດ້.

## ສຽງດັງຫລືສຽງສະທ້ອ 生活騒音（せいかつそうおん）

ຕຶກອາຄານທີ່ຢູ່ລວມກັນນັ້ນ, ຂ້າງຄຽງ, ຊັ້ນເທິງ, ຊັ້ນລຸ່ມ, ຈະສົ່ງສຽງສະທ້ອນຫາກັນໄດ້ຢ່າງງ່າຍໆ. ສະນັ້ນ, ກາງຄືນແລະຕອນເຊົ້າໆ ຈະເຮັດຫັຽງ ຕ້ອງລະວັງ ບໍ່ໃຫ້ມີສຽງດັງອອກໄປ.

◆ສຽງຕ່າງໆເຫລົ່ານີ້, ຈະສົ່ງສຽງສະທ້ອນອອກໄປ ໃຫ້ລະວັງດ້ວຍ.



ສຽງຂອງໂທລະທັດແລະວິທະຍຸ



ສຽງເຄື່ອງດົນຕີ



ສຽງເວົ້າລົມກັນແຮງໆ




ສຽງຈັກດູດຝຸ່ນແລະຈັກຊັກເຄື່ອງ



ສຽງອາບນ້ຳປ່ອຍນ້ຳ ໂອຟໂລ




ສຽງເປີດປິດປະຕູ

## ວິທີໃຊ້ຫ້ອງອາບນ້ຳ ແລະ ສ້ວມຖ່າຍ 浴室（よくしつ）・トイレの使（つか）い方（かた）

ຫ້ອງອາບນ້ຳ ແລະ ສ້ວມຖ່າຍ, ຖ້າວ່າຮູປ່ອຍນ້ຳຕັນແລ້ວ, ນ້ຳຈະອັ່ງຂຶ້ນມາຈະພາໃຫ້ເປັນເລື່ອງໃຫ່ຍ. ຖ້າວ່ານ້ຳໄຫລລົງໄປເຖິງຊັ້ນລຸ່ມ ໄດ້ຮັບຄວາມເສັຍຫາຍ, ຕ້ອງໄດ້ຈ່າຍຄ່າເສັຍຫາຍນັ້ນທົດແທນ.



ຮູລະບາຍນ້ຳ ບໍ່ໃຫ້ຂົນຫລືຜົມໄຫລລົງໄປ





ກະດາດສ້ວມຖ່າຍ



ເຈ້ຍເຊັດສົບ



ຜ້າອານາໄມ

ສ້ວມຖ່າຍຕ້ອງໃຊ້ແຕ່ເຈ້ຍສ້ວມຖ່າຍເທົ່ານັ້ນຖິ້ມລົງ

## ການໃຊ້ລະບຽງ ベランダの使い方

ຕາມລະບຽງ ພາກັນຕາກຜ້າແລະເອົາຕົ້ນດອກໄມ້ວາງໄວ້, ລະວັງ ຢ່າໃຫ້ຕົກລົງໄປຂ້າງລ່າງເດັດຂາດ.
ລະບຽງແມ່ນທາງຜ່ານເວລາເກີດເຫດສຸກເສີນ, ບໍ່ແມ່ນບ່ອນໃຫ້ວາງສິ່ງຂອງ, ຈົ່ງລະວັງດ້ວຍ.



ລະວັງ ຮາວຕາກຜ້າແລະຕົ້ນດອກໄມ້ຈະຕົກລົງ.



ທາງຜ່ານເວລາເກີດເຫດສຸກເສີນວາງສິ່ງຂອງບໍ່ໄດ້.

## ການໃຊ້ຂອງສ່ວນລວມ 共有部分の使い方

ນອກຈາກຫ້ອງຂອງໂຕເອງແລ້ວ ມີລະບຽງ, ຄັນໄດ, ເປັນຂອງທຸກໆຄົນໃຊ້ລວມກັນ.
ເວລາເກີດແຜ່ນດິນໄຫວຫລືໄຟໃໝ້ຈະໄດ້ໃຊ້ເປັນທາງຜ່ານ, ເອົາສິ່ງຂອງໂຕເອງວາງໄວ້ບໍ່ໄດ້.



ທີ່ ລະບຽງແລະຄັນໄດ, ເອົາຂອງໂຕເອງວາງໄວ້ຕາມລຳພັງໃຈບໍ່ໄດ້.

## ບ່ອນໄວ້ລົດຖີບ . ບ່ອນຈອດລົດໃຫ່ຍ 自転車置き場・駐車場

ລົດຖີບ ໃຫ້ເອົາໄປໄວ້ບ່ອນມ້ຽນທີ່ໄດ້ປຸກສ້າງໄວ້ໃຫ້ນັ້ນ.
ລົດໃຫ່ຍ ໃຫ້ເຊົ່າບ່ອນຈອດ, ຈອດຕາມແຄມທາງໃນບໍລິເວນເຮືອນຫລວງບໍ່ໄດ້.




ລົດຖີບ ບໍ່ໃຫ້ປະໄວ້ທາງຄົນຍ່າງ, ໃຫ້ເອົາໄປໄວ້ບ່ອນມ້ຽນເປັນປະຈຳ.

## ການກວດກາເບິ່ງໃບສັນຍາເຊົ່າເຮືອນ 契約書で確認すること

ເຮືອນຫລວງທີ່ຢູ່ລວມກັນແຕ່ລະບ່ອນນັ້ນ, ການໃຫ້ໃຊ້ຫ້ອງເຮືອນ ຈະມີກຳນົດແຕກຕ່າງກັນນ້ອຍນຶ່ງ. ເຮືອນສ່ວນລວມບ່ອນເຈົ້າຢູ່ນີ້, ຂໍ້ຕັກເຕືອນມີຫັຍງແດ່, ໃຫ້ອ່ານເບິ່ງໃນໃບສັນຍາ.

◆ຮູບຕາງໆຂ້າງລຸ່ມນີ້, ຖ້າແມ່ນເຮືອນລວມໝູ່ແລ້ວ, ຢູ່ໃສກໍຫ້າມຄືກັນໝົດ.



ຫ້າມລ້ຽງສັດ



ຫ້າມຕອກຕະປູແລະທາສີ



ຜູ້ທີ່ບໍ່ມີຊື່ຢູ່ໃນສັນຍາແລ້ວເຂົ້າຢູ່ນຳກັນບໍ່ໄດ້.



ເຮືອນເຊົ່າສຳລັບໃຫ້ອາໃສຢູ່, ຈະເອົາເປີດຮ້ານຫລືເອົາເຮັດຫ້ອງການບໍ່ໄດ້.

## ຮູ້ ຈັກ ບໍ ?

## ກຳມະການປົກຄອງບ້ານ ແລະ ກຳມະການປົກຄອງຄຸ້ມ 町内会・自治会

ຢູ່ປະເທດຍີ່ປຸ່ນ, ຕາມທຳມະດາ, ປະຊາຊົນຈະຕັ້ງຄະນະກຳມະການ ປົກຄອງໄວ້ ຕາມໃນເມືອງເອີ້ນວາ : ໂຈໃນໄກ. ຕາມບ້ານເອີ້ນວ່າ: ຢິຈິໄກ, ທັງສອງການປົກຄອງຄືກັນເວລາມີໜັງສືໝູນວຽນຫລືປະກາດຈາກ (ໂຮງການເມືອງ ຫລື ຈາກສູນອານາໄມ) ດ້ານການປ້ອງກັນຄວາມສະຫງົບ, ຝຶກັດຫລົບໄພຕ່າງໆ, ໃຫ້ປະຊາຊົນເຕົ້າໂຮມກັນ, ວາງແຜນຈັດງານບຸນແລະອື່ນໆ. ຄະນະກຳມະການເປັນຜູ້ເຄື່ອນໃຫວເກັບເງິນຄ່າສະມາຊິກແລະຮັບໃຊ້ປະຊາຊົນທາງດ້ານຊີວິດປະຈຳວັນອີກດ້ວຍ. ຄົນຕ່າງດ້າວທຸກໆທ່ານ, ຖ້າວ່າຢູ່ຢ່າງຖືກຕ້ອງເຂົ້າຮ່ວມກໍໄດ້, ໃຫ້ສອບຖາມນຳພະນັກງານຄຸ້ມບ້ານ.




O ບ່ອນຕິດຕໍ່ : ( ສູນກາງ ອູ້ມຊູ ບ່ອນອາໃສ ແກ່ຄົນຕ່າງດ້າວ ທີ່ ຄານາກາວາ )
ທີ່ຢູ່ : 〒231-8458 YOKOHAMA-SHI NAKA-KU TOKIWA-CHO1 -7 ເບີໂທ:045-228-1752

ພິມອອກປີ 2000 ເດືອນ 3 ໂດຍຂະແໜງນາໆຊາດປະຈຳແຂວງຄານາກາວາ ເບີໂທ:045-210-1111